# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນາຍົກລັດຖະມົນຕີ

ເລກທີ່......67......../ນຍ

*ນະຄອນຫລວງວຽງຈັນ, ວັນທີ* 18.05.2004

## ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງອົງການຄຸ້ມຄອງ ທີ່ດິນແຫ່ງຊາດ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ກົດໝາຍ ວ່າດ້ວຍທີ່ດິນ ສະບັບເລກທີ 04/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ການຕົກລົງ ຂອງກອງປະຊຸມລັດຖະບານ ຄັ້ງວັນທີ 15 -16 ມີນາ 2004.
- ອີງຕາມ ການສະເໜີ ຂອງລັດຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ, ຜູ້ຮັບຜິດຊອບວຽກ ງານວາງແຜນ ແລະ ພັດທະນາທີ່ດິນ.

## ນາຍົກລັດຖະມົນຕີ ອອກດຳລັດ

### ໝວດທີ I
### ທີ່ຕັ້ງ ແລະ ພາລະບົດບາດ

**ມາດຕາ 1. ທີ່ຕັ້ງ ແລະ ພາລະບົດບາດ**

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເອີ້ນຊື່ຫຍໍ້ວ່າ " ອຄທຊ " ແມ່ນອົງການຈັດຕັ້ງຄຸ້ມຄອງລັດຂັ້ນສູນກາງ ສັງກັດຢູ່ໃນໂຄງປະກອບກົງຈັກການຈັດຕັ້ງ ຂອງສຳນັກງານນ າຍົກລັດຖະມົນຕີ ມີຖານະເທົ່າກັບທະບວງ, ມີພາລະບົດບາດເປັນເສນາທິການຊ່ວຍລັດຖະບານ ໃນການຄຸ້ມຄອງລັດກ່ຽວກັບທີ່ດິນໃນຂອບເຂດທົ່ວປະເທດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 2. ໜ້າທີ່**

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ມີໜ້າທີ່ດັ່ງນີ້:

2.1 ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ ແລະ ນິຕິກຳຕ່າງໆຂອງພັກ, ລັດວາງອອກ ທີ່ພົວພັນເຖິງວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນໃນຂອບເຂດທົ່ວປະເທດ;

2.2 ຄົ້ນຄວ້າກຳນົດນະໂຍບາຍ, ຮ່າງກົດໝາຍ, ສ້າງແຜນຍຸດທະສາດ, ແຜນແມ່ບົດກ່ຽວກັບການຄຸ້ມຄອງ, ນຳໃຊ້ ແລະ ພັດທະນາທີ່ດິນ ເພື່ອສະເໜີລັດຖະບານ ພິຈາລະນາ;

2.3 ສຳຫລວດວັດແທກ, ຈັດສັນທີ່ດິນ, ຈັດແບ່ງເຂດ, ຈັດແບ່ງປະເພດທີ່ດິນ ແລະ ສ້າງແຜນທີ່ປົກປັກຮັກສາ ແລະ ນຳໃຊ້ທີ່ດິນໃນລະດັບທ້ອງຖິ່ນ, ເຂດແຄ້ວນ ແລະ ລະດັບຊາດ ເພື່ອສະເໜີລັດຖະບານພິຈາລະນາ;

2.4 ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອວາງແຜນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ, ປົກປັກຮັກສາສິ່ງແວດລ້ອມ, ພັດທະນາທີ່ດິນ ແລະ ກວດກາການນຳໃຊ້ທີ່ດິນ ທຸກປະເພດຕາມແຜນການນຳໃຊ້ທີ່ດິນ ເພື່ອສະເໜີຕໍ່ ລັດຖະບານອະນຸມັດ;

2.5 ຄົ້ນຄວ້ານຳສະເໜີລັດຖະບານ ພິຈາລະນາຕົກລົງກ່ຽວກັບການມອບສິດນຳໃຊ້, ການໃຫ້ເຊົ່າ ຫລື ໃຫ້ສຳປະທານທີ່ດິນ ແກ່ນັກລົງທຶນພາຍໃນ ແລະ ຕ່າງປະເທດ; ການຫັນປ່ຽນເປົ້າໝາຍນຳໃຊ້ທີ່ດິນຈາກປະ ເພດໜຶ່ງໄປສູ່ອີກປະເພດໜຶ່ງ;

2.6 ສ້າງ ແລະ ຄຸ້ມຄອງສຳມະໂນທີ່ດິນ, ເກັບກຳສະຖິຕິທີ່ດິນ, ປະເມີນມູນຄ່າທີ່ດິນ ແລະ ສິ່ງປຸກສ້າງ, ຂຶ້ນ ທະບຽນທີ່ດິນ, ຈົດທະບຽນທີ່ດິນ, ອອກໃບຕາດິນ ແລະ ເກັບຄ່າທຳນຽມທີ່ດິນ;

2.7 ຄົ້ນຄວ້າແກ້ໄຂ ຫລື ນຳສະເໜີຂັ້ນເທິງແກ້ໄຂຂໍ້ຂັດແຍ່ງກ່ຽວກັບທີ່ດິນ ທີ່ມີລັກສະນະບໍລິຫານຕາມການສະເໜີຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ຫລື ຜູ້ນຳໃຊ້ທີ່ດິນ ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ບໍລິຫານທີ່ດິນຖືກຕ້ອງຕາມເປົ້າໝາຍ, ມີຄວາມສະຫງົບ ແລະ ຍຸຕິທຳ;

2.8 ຄຸ້ມຄອງ ແລະ ສະໜອງຂໍ້ມູນຂ່າວສານກ່ຽວກັບທີ່ດິນ; ວາງນະໂຍບາຍ ແລະ ລະບຽບການ ເພື່ອຄຸ້ມຄອງການຈັດຕັ້ງ ແລະ ການເຄື່ອນໄຫວຊື້-ຂາຍສິດນຳໃຊ້ທີ່ດິນ ແລະ ຄຸ້ມຄອງຜູ້ປະກອບອາຊີບທີ່ພົວພັນກ່ຽວກັບທີ່ດິນ;

2.9 ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ບົນພື້ນຖານລະບຽບຫລັກການຂອງລັດ ເພື່ອຍາດແຍ່ງການຊ່ວຍເຫລືອທາງດ້ານທຶນຮອນ, ວິທະຍາສາດ-ວິທະຍາການ, ເຕັກໂນໂລຊີ ແລະ ອື່ນໆ ເພື່ອນຳມາປັບປຸງ ແລະ ໝູນໃຊ້ເຂົ້າໃນວຽກງານການຄຸ້ມຄອງ ແລະ ບໍລິຫານທີ່ດິນຂອງປະເທດ ຊາດໃຫ້ມີປະສິດທິພາບຕາມການມອບໝາຍຂອງລັດຖະບານ;

2.10 ສ້າງແຜນການ, ແຜນງົບປະມານ ສໍາລັບການເຄື່ອນໄຫວວຽກງານໃນຂະແໜງການຂອງດິນ ເພື່ອນໍາສະເໜີຕໍ່ລັດຖະບານ ພິຈາລະນາອະນຸມັດ;

2.11 ຄຸ້ມຄອງ, ກໍ່ສ້າງ ແລະ ບໍາລຸງຍົກລະດັບພະນັກງານລັດຖະກອນໃນຂະແໜງການຂອງດິນເພື່ອໃຫ້ມີທັດ ສະນະຫລັກໝັ້ນອັນໜັກແໜ້ນທາງດ້ານການເມືອງ, ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້ຄວາມສາມາດທາງດ້ານວິຊາການໃນລະດັບອັນແນ່ນອນ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການໃນ ການປະຕິບັດໜ້າທີ່ການເມືອງ ແລະ ວິຊາສະເພາະຂອງຂະແໜງການດິນແຕ່ລະໄລຍະ;

2.12 ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ ແລະ ຕາມທີ່ໄດ້ກໍານົດໄວ້ຢູ່ໃນລະບຽບ ກົດໝາຍ.

**ມາດຕາ 3. ຂອບເຂດສິດ**

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ມີຂອບເຂດສິດດັ່ງນີ້:

3.1 ປະກາດໃຊ້ບັນດາລະບຽບການ, ແຈ້ງການ, ຄໍາສັ່ງ, ຂໍ້ຕົກລົງ ແລະ ບົດແນະນໍາຕ່າງໆ ທີ່ພົວພັນເຖິງການຄຸ້ມຄອງ ແລະ ບໍລິຫານທີ່ດິນໃນຂອບເຂດທົ່ວປະເທດ;

3.2 ອອກໃບອະນຸມັດການຫັນປ່ຽນເປົ້າໝາຍນໍາໃຊ້ທີ່ດິນ ຈາກປະເພດໜຶ່ງໄປສູ່ອີກປະເພດໜຶ່ງ, ການໃຫ້ເຊົ່າ ຫລື ໃຫ້ສໍາປະທານທີ່ດິນແຕ່ລະປະເພດ ພາຍຫຼັງລັດຖະບານໄດ້ຕົກລົງເຫັນດີແລ້ວ;

3.3 ສະເໜີຕໍ່ລັດຖະບານ ຫລື ນາຍົກລັດຖະມົນຕີ ເພື່ອສັ່ງຢຸດຕິ ຫລື ງົດການປະຕິບັດຂໍ້ຕົກລົງ ແລະ ນິຕິກໍາຕ່າງໆຂອງກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ເຫັນວ່າຂັດກັບກົດໝາຍ, ນະໂຍບາຍ ແລະ ລະບຽບການຕ່າງໆ ກ່ຽວກັບວຽກງານການຄຸ້ມຄອງ ແລະ ບໍລິຫານທີ່ດິນ;

3.4 ຕົກລົງສ້າງຕັ້ງ, ປັບປຸງ ຫລື ລົບລ້າງບັນດາກົງຈັກທີ່ຢູ່ໃນຄວາມຮັບຜິດຊອບຂອງອົງການຄຸ້ມຄອງທີ່ດິນ ແຫ່ງຊາດ ຕາມການແບ່ງຂັ້ນຄຸ້ມຄອງທີ່ເປັນເອກະພາບ ກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກ ຄອງທ້ອງຖິ່ນ ໂດຍໄດ້ຮັບການຕົກລົງເຫັນດີ ຈາກນາຍົກລັດຖະມົນຕີ ;

3.5 ເຂົ້າຮ່ວມຄົ້ນຄວ້າ ແລະ ປະກອບຄໍາຄິດຄໍາເຫັນໃນກອງປະຊຸມທັງພາຍໃນ ແລະ ຕ່າງປະເທດໃນຂົງເຂດວຽກງານການຄຸ້ມຄອງ, ບໍລິຫານທີ່ດິນ ແລະ ວຽກງານອື່ນໆຕາມການອະນຸມັດຈາກລັດຖະບານ;

3.6 ລົງນາມເຊັນສັນຍາ, ອານຸສັນຍາ ແລະ ບົດບັນທຶກຊ່ວຍຈໍາໃນການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນຕາມການອະນຸມັດຂອງລັດຖະບານ. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດບັນດາໂຄງການ ທີ່ ອົງການຈັດຕັ້ງສາກົນ ຫລື ຕ່າງປະເທດ ໃຫ້ການຊ່ວຍເຫລືອລ້າ ຫລື ໃຫ້ທຶນກູ້ຢືມກ່ຽວກັບວຽກງານທີ່ດິນ;

3.7 ຄຸ້ມຄອງ, ນໍາໃຊ້ງົບປະມານ ແລະ ລາຍຮັບທາງດ້ານວິຊາການຕາມທີ່ລັດຖະບານອະນຸມັດ ແລະ ຕາມ ລະບຽບກົດໝາຍ;

3.8 ຄຸ້ມຄອງ, ແຕ່ງຕັ້ງ, ເລື່ອນຊັ້ນ, ຍ້ອງຍໍ, ຍົກຍ້າຍໜ້າທີ່, ປົດຕຳແໜ່ງ, ປະຕິບັດວິໄນ, ປະຕິບັດນະໂຍບາຍ ແລະ ນຳໃຊ້ພະນັກງານລັດຖະກອນທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຕາມລະບຽບຫລັກການ ທີ່ໄດ້ກຳນົດໄວ້. ສຳລັບຫົວໜ້າ ແລະ ຮອງຫົວໜ້າອົງການຄຸ້ມຄອງ ທີ່ດິນປະຈຳແຂວງ, ນະຄອນ, ຫົວໜ້າ ແລະ ຮອງຫົວໜ້າອົງການຄຸ້ມຄອງທີ່ດິນປະຈຳເມືອງ, ເທດສະບານ ກ່ອນຈະມີການແຕ່ງຕັ້ງ, ປົດຕຳແໜ່ງ ຫລື ຍົກຍ້າຍຕ້ອງໄດ້ປຶກສາຫາລື ແລະ ເປັນເອກະພາບກັບອົງການປົກຄອງທ້ອງຖິ່ນເສຍກ່ອນ;

3.9 ປະຕິບັດສິດອື່ນໆ ຕາມການມອບໝາຍຂອງລັດຖະບານ ແລະ ຕາມທີ່ໄດ້ກຳນົດໄວ້ຢູ່ໃນລະບຽບ ກົດໝາຍ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

### ມາດຕາ 4. ໂຄງປະກອບບຸກຄະລາກອນ

4.1 ອົງການຄຸ້ມຄອງທີ່ດິນແຫ່ງຊາດມີຫົວໜ້າອົງການ 1 ທ່ານ ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ. ຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ ມີຄວາມຮັບຜິດຊອບໃນການຄຸ້ມຄອງ, ການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ກ່ຽວກັບການຄຸ້ມຄອງ ແລະ ບໍລິຫານທີ່ດິນ, ເປັນຜູ້ຮັບຜິດຊອບໂດຍກົງຕໍ່ນາຍົກລັດຖະມົນຕີ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງໃນການປະຕິບັດໜ້າທີ່ ແລະ ຂອບເຂດສິດຂອງອົງການ ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 02 ແລະ 03 ຂອງດຳລັດສະບັບນີ້;

4.2 ອົງການຄຸ້ມຄອງທີ່ດິນແຫ່ງຊາດມີຮອງຫົວໜ້າອົງການ, ຫົວໜ້າຫ້ອງການ, ຫົວໜ້າສູນ ແລະ ຫົວໜ້າກົມຈຳນວນໜຶ່ງຖືກແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງ ຫົວໜ້າອົງການ;

4.3 ອົງການຄຸ້ມຄອງທີ່ດິນແຫ່ງຊາດມີຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສູນ, ຫົວໜ້າ, ຮອງຫົວໜ້າພະແນກ ສັງກັດຢູ່ຫ້ອງການ, ບັນດາກົມ ແລະ ສູນ; ມີຫົວໜ້າ, ຮອງຫົວໜ້າອົງການ ຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງໂດຍລັດ ຖະມົນຕີປະຈຳສຳນັກງານນາຍົກລັດຖະມົນຕີ;

4.4 ມີຫົວໜ້າ, ຮອງຫົວໜ້າອົງການຄຸ້ມຄອງທີ່ດິນປະຈຳເມືອງ ແລະ ເທດສະບານ ເຊິ່ງຖືກແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນ ຕາມການເຫັນດີເປັນເອກະພາບກັບຫົວໜ້າອົງ ການຄຸ້ມຄອງທີ່ດິນແຫ່ງຊາດ;

4.5 ອົງການຄຸ້ມຄອງທີ່ດິນແຫ່ງຊາດ ຍັງປະກອບມີຫົວໜ້າຂະແໜງ, ຫົວໜ້າໜ່ວຍງານ ແລະ ພະນັກງານວິຊາການຊ່ວຍວຽກຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນຈຳນວນໜຶ່ງ ຕາມຄວາມເໝາະສົມຂອງຕຳແໜ່ງງານ.

ມາດຕາ 5. **ໂຄງປະກອບກົງຈັກການຈັດຕັ້ງ**

5.1 ຢູ່ຂັ້ນສູນກາງປະກອບມີ:

- ຫ້ອງການ;
- ກົມນະໂຍບາຍ, ວາງແຜນ ແລະ ພັດທະນາທີ່ດິນ;
- ກົມທີ່ດິນ;
- ກົມກວດກາທີ່ດິນ;
- ສູນຂໍ້ມູນຂ່າວສານທີ່ດິນ.

5.2 ຢູ່ຂັ້ນທ້ອງຖິ່ນປະກອບມີ:

- ອົງການຄຸ້ມຄອງທີ່ດິນ ປະຈຳແຂວງ, ນະຄອນ;
- ອົງການຄຸ້ມຄອງທີ່ດິນ ປະຈຳເມືອງ, ເທດສະບານ;
- ໜ່ວຍງານທີ່ດິນ ປະຈຳບ້ານ.

ອົງການຄຸ້ມຄອງທີ່ດິນຂັ້ນທ້ອງຖິ່ນ ຢູ່ພາຍໃຕ້ການຊີ້ນຳ - ນຳພາ ແລະ ຄຸ້ມຄອງ ຂອງອົງການປົກຄອງທ້ອງຖິ່ນ ທາງດ້ານຊີວິດການເມືອງ ແລະ ຢູ່ພາຍໃຕ້ການຊີ້ນຳ-ນຳພາ ແລະ ຄຸ້ມຄອງຂອງອົງ ການຄຸ້ມຄອງທີ່ດິນແຫ່ງຊາດ ທາງດ້ານວິຊາສະເພາະ.

5.3 ມອບໃຫ້ຫົວໜ້າອົງການຄຸ້ມຄອງທີ່ດິນແຫ່ງຊາດ ອອກຂໍ້ຕົກລົງຕ່າງຫາກ ເພື່ອກຳນົດກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ບັນດາກົມ, ສູນ, ພະແນກ, ອົງການຄຸ້ມຄອງທີ່ດິນປະຈຳແຂວງ, ນະຄອນ, ອົງການຄຸ້ມຄອງທີ່ດິນປະຈຳເມືອງ, ເທດສະບານ ແລະ ໜ່ວຍງານ ທີ່ດິນປະຈຳບ້ານ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

ມາດຕາ 6. **ຫລັກການ ແລະ ວິທີການ**

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ເຄື່ອນໄຫວວຽກງານຕາມຫລັກການລວມດັ່ງລຸ່ມນີ້:

6.1 ປະຕິບັດຫລັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບແຜນການ, ການເງິນງົບປະມານ, ການຈັດຕັ້ງ ແລະ ການພົວພັນຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ. ປະຕິບັດລະບອບ ຫົວໜ້າດຽວ ບົນພື້ນຖານການແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ;

6.2 ເຄື່ອນໄຫວ ແລະ ດຳເນີນງານຢ່າງມີແຜນການ ໂດຍຫັນເອົາແນວທາງນະໂຍບາຍ ແລະ ມະຕິຕົກລົງຂອງສູນກາງພັກ ແລະ ລັດຖະບານ ກ່ຽວກັບວຽກງານການຄຸ້ມຄອງ ແລະ ບໍລິຫານທີ່ດິນ ເປັນແຜນງານ ແລະ ໂຄງການອັນລະອຽດໃນແຕ່ລະໄລຍະ;

6.3 ຄຸ້ມຄອງທາງດ້ານມະຫາພາກຢ່າງລວມສູນ ແລະ ເປັນເອກະພາບ ໂດຍປະຕິບັດການຕິດຕາມກວດກາ ການຊຸກຍູ້ທຸກພາກສ່ວນຄຸ້ມຄອງນຳໃຊ້ທີ່ດິນ ແລະ ພາກສ່ວນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ເພື່ອຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງ

ລັດຢ່າງເຂັ້ມງວດ ກ່ຽວກັບວຽກງານການຄຸ້ມຄອງ ແລະ ບໍລິຫານທີ່ດິນໃຫ້ໄດ້ຮັບໝາກຜົນເປັນຢ່າງດີ; ກໍານົດວິທີການ ແລະ ມາດຕະການ ເພື່ອແກ້ໄຂຢ່າງທັນການຕໍ່ກັບບັນຫາຕ່າງໆທີ່ເກີດຂຶ້ນ ຊຶ່ງຈະນໍາຄວາມເສຍຫາຍມາໃຫ້ແກ່ລັດ ແລະ ສັງຄົມ;

6.4 ປະຕິບັດລະບອບລາຍງານ, ຮ່ວມປະຊຸມ, ສະຫລຸບຕີລາຄາ, ຖອດຖອນບົດຮຽນ, ກວດກາ ແລະ ສ່ອງແສງປະຈໍາອາທິດ, ປະຈໍາເດືອນ, ສາມເດືອນ, ຫົກເດືອນ ແລະ ປະຈໍາປີ ຢ່າງເຂັ້ມງວດ ເພື່ອເກັບ ກໍາສະພາບຮອບດ້ານ ແລ້ວສັງລວມລາຍງານໃຫ້ລັດຖະບານຊາບຢ່າງເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 7. ງົບປະມານ ແລະ ຕາປະທັບ**

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 8. ການຈັດຕັ້ງປະຕິບັດ**

ອົງການຄຸ້ມຄອງທີ່ດິນແຫ່ງຊາດ, ສໍານັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 9. ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນດໍາລັດສະບັບເລກທີ 237/ນຍ, ລົງວັນທີ 11 ທັນວາ 2001 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມວາງແຜນ ແລະ ພັດທະນາທີ່ດິນແຫ່ງຊາດ ແລະ ໃຫ້ປັບປຸງຄືນໃໝ່ບາງເນື້ອໃນຂອງດໍາລັດສະບັບເລກທີ 127/ນຍ, ລົງວັນທີ 3 ຕຸລາ 2000 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ.

ຂໍ້ບັນຍັດໃດທີ່ລະບຸໄວ້ໃນດໍາລັດ ຫລື ຂໍ້ຕົກລົງສະບັບອື່ນໆ ເຊິ່ງຂັດກັບດໍາລັດສະບັບນີ້ແມ່ນໃຫ້ຍົກເລີກ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**